ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂການລະບາດຂອງພະຍາດCOVID-19

ເລກທີ 167 / ຖວທ
ນະຄອນຫຼວງວຽງຈັນ, ວັນທີ 16 ພຶດສະພາ 2020

# ຄຳແນະນຳ

## ສຳລັບຜູ້ປະກອບການສະຖານທີ່ທ່ອງທ່ຽວ, ໂຮງແຮມ, ຣີສອດ, ເຮືອນພັກ, ຮ້ານອາຫານ, ຮ້ານກາເຟ, ຮ້ານຕັດຜົມ, ຮ້ານເສີມສວຍ, ຮ້ານນວດ, ຮ້ານສະປາທຸກປະເພດ ໃນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະແຕ່ ວັນທີ 18 ພຶດສະພາ ຫາວັນທີ 1 ມິຖຸນາ 2020

- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງເຊື້ອພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19, ເລກທີ 09/ນຍ, ລົງວັນທີ 3 ກຸມພາ 2020;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19, ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ວ່າດ້ວຍການສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ ແລະ ມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະແຕ່ ວັນທີ 18 ພຶດສະພາ ຫາວັນທີ 1 ມິຖຸນາ 2020, ສະບັບເລກທີ 580, ລົງວັນທີ 15 ພຶດສະພາ 2020.

ເພື່ອປະຕິບັດ ຄຳແນະນຳ ກ່ຽວກັບເງື່ອນໄຂ ແລະ ມາດຕະການ ສຳລັບທຸລະກິດ ທີ່ສາມາດດຳເນີນກິດຈະການ ໃນໄລຍະທີ່ມີການລະບາດຂອງພະຍາດ COVID-19 ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ພ້ອມທັງສອດຄ່ອງກັບສະພາວະຄວາມເປັນຈິງ.

**ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ອອກຄຳແນະນຳ ດັ່ງນີ້:**

**1. ສຳລັບຜູ້ປະກອບການ ສະຖານທີ່ທ່ອງທ່ຽວ, ໂຮງແຮມ, ຣີສອດ, ເຮືອນພັກ, ຮ້ານອາຫານ, ຮ້ານກາເຟ, ຮ້ານຕັດຜົມ, ຮ້ານເສີມສວຍ, ຮ້ານນວດ, ຮ້ານສະປາທຸກປະເພດ ທີ່ອະນຸມັດໃຫ້ເປີດບໍລິການ**

1) ຕ້ອງແທກອຸນຫະພູມພະນັກງານ ກ່ອນເຂົ້າຮັບວຽກ ຖ້າພົບວ່າມີອຸນຫະພູມ ສູງກວ່າ 37.5 ອົງສາ ໃຫ້ ໂທຫາສາຍດ່ວນ 165 ຫຼື 166 ເພື່ອຂໍຄຳປຶກສາ ;
2) ຕ້ອງບັນທຶກຊື່, ນາມສະກຸນ, ທີ່ຢູ່ ແລະ ເບີໂທ ຂອງທຸກຄົນທີ່ມາໃຊ້ບໍລິການ ;
3) ຕ້ອງໃຫ້ຂໍ້ມູນ, ຄວາມຮູ້ ແລະ ຄຳແນະນຳ ກ່ຽວກັບການປ້ອງກັນການລະບາດພະຍາດ ໂຄວິດ-19 ເປັນຕົ້ນ ການລ້າງມືໃຫ້ຖືກວິທີ, ອາການຂອງພະຍາດໂຄວິດ-19 ແລະ ວິທີປ້ອງກັນຕົນເອງ ແກ່ຜູ້ມາໃຊ້ບໍລິການ ແລະ ພະນັກງານທຸກຄົນຕ້ອງໃສ່ຜ້າອັດປາກ-ດັງ ;

4) ຕ້ອງຈັດຕັ້ງວາງອ່າງລ້າງມືພ້ອມສະບູ ຫຼື ເຈວລ້າງມື ຫຼື ເຫຼົ້າ 70% ຂຶ້ນໄປ ສໍາລັບຂ້າເຊື້ອ ໄວ້ປະຕູທາງເຂົ້າຮ້ານ, ຫ້ອງນ້ຳ, ບໍລິເວນໂຕະຈ່າຍເງິນ ເພື່ອໃຫ້ບໍລິການແກ່ຜູ້ມາໃຊ້ບໍລິການ ລວມທັງພະນັກງານໃນຮ້ານ;
5) ຕ້ອງຈັດຫາຖົງມື, ນ້ຳຢາຂ້າເຊື້ອ ຫຼື ເຫຼົ້າ 70% ຂຶ້ນໄປ ຫຼື ນ້ຳແຟັບ ແລະ ອື່ນໆ ສໍາລັບອະນາໄມ ອຸປະກອນ ແລະ ເຄື່ອງໃຊ້ທີ່ມີຜູ້ສໍາຜັດຈໍານວນຫຼາຍ ເປັນຕົ້ນ ປຶ້ມລາຍການອາຫານ, ໂຕະອາຫານ, ບ່ອນຈັບປະຕູເຂົ້າ-ອອກ, ບ່ອນໄຂປະຕູຫ້ອງນ້ຳ, ອຸປະກອນດົນຕີ ແລະ ເສີມສວຍ ;
6) ສໍາລັບອຸປະກອນເຄື່ອງໃຊ້ໃນຫ້ອງນອນ, ໃນຫ້ອງນ້ຳ, ອຸປະກອນດົນຕີ, ອຸປະກອນເສີມສວຍ ແລະ ອື່ນໆ ຕ້ອງໃຫ້ມີການອະນາໄມດ້ວຍນ້ຳຢາຂ້າເຊື້ອກ່ອນ ແລະ ຫຼັງໃຊ້ທຸກຄັ້ງ ;
7) ທັງໝົດທຸກປະເພດບໍລິການ ຕ້ອງປິດການບໍລິການບໍ່ໃຫ້ກາຍ 21:30 ໂມງ .

**4.2. ສໍາລັບຜູ້ໃຫ້ບໍລິການ**

1) ຕ້ອງແທກອຸນຫະພູມພະນັກງານ ກ່ອນເຂົ້າເຮັດວຽກ ຖ້າພົບວ່າມີອຸນຫະພູມ ສູງກວ່າ 37.5 ອົງສາ ໃຫ້ໂທຫາສາຍດ່ວນ 165 ຫຼື 166 ເພື່ອຂໍຄໍາປຶກສາ;
2) ຕ້ອງຮັກສາສຸຂະອະນາໄມເປັນຕົ້ນ: ໃສ່ຜ້າອັດປາກ-ດັງ, ໃສ່ຖົງມື, ໝວກຄຸມຜົມ, ການນຸ່ງຖືສະອາດ ແລະ ໝັ່ນລ້າງມືໃສ່ສະບູເປັນປະຈໍາ;
3) ຕ້ອງຮັກສາໄລຍະຫ່າງ ຢ່າງໜ້ອຍ 01 ແມັດ ຂຶ້ນໄປ;
4) ຕ້ອງຮັກສາມາລະຍາດໃນການໄອ-ຈາມ.

**4.3. ສໍາລັບຜູ້ມາໃຊ້ບໍລິການ (ລູກຄ້າ)**

1) ທຸກໆຄົນທີ່ເຂົ້າມາໃນຮ້ານ ຕ້ອງໄດ້ຮັບການແທກອຸນຫະພູມ ຖ້າພົບວ່າມີອຸນຫະພູມສູງກວ່າ 37.5 ອົງສາ ແມ່ນບໍ່ອະນຸຍາດໃຫ້ເຂົ້າໃນຮ້ານ ແລະ ໃຫ້ໂທຫາສາຍດ່ວນ 165 ຫຼື 166 ເພື່ອຂໍຄໍາປຶກສາ;
2) ຕ້ອງລ້າງມືດ້ວຍສະບູ ຫຼື ເຈວລ້າງມື ຫຼື ເຫຼົ້າສໍາລັບຂ້າເຊື້ອ ທີ່ຮ້ານກະກຽມໄວ້ ກ່ອນເຂົ້າ ແລະ ອອກຈາກຮ້ານ ແລະ ໃສ່ຜ້າອັດປາກ-ດັງ;
3) ຕ້ອງຮັກສາໄລຍະຫ່າງ ຢ່າງໜ້ອຍ 01 ແມັດ ຂຶ້ນໄປ;
4) ຕ້ອງຮັກສາມາລະຍາດໃນການໄອ-ຈາມ ແລະ ຖິ້ມຂີ້ເຫຍື້ອ ຕາມບ່ອນທີ່ຮ້ານກໍານົດໄວ້.

**4.4. ສະຖານທີ່**

1) ຕ້ອງໃຫ້ມີອາກາດຖ່າຍເທດີ ແລະ ບໍ່ແອອັດ;
2) ການຈັດສະຖານທີ່ຕ້ອງຮັກສາໄລຍະຫ່າງ ຢ່າງໜ້ອຍ 01 ແມັດ ຂຶ້ນໄປ;
3) ຕ້ອງອະນາໄມທຸກມື້ (ເຊົ້າ ແລະ ແລງ) ເປັນຕົ້ນ: ພື້ນ, ຝາ, ເພດານ, ໂຕະ, ຕັ່ງ, ຫ້ອງນ້ຳ ດ້ວຍນ້ຳຢາຂ້າເຊື້ອໂຊດຽມໄຮໂປຄໍລໍຣິດ(Sodium Hypochlorite) 0,1%, ນ້ຳແຟັບ, ໄລຊໍ ຫຼື ເຫຼົ້າ 70% ຂຶ້ນໄປ ແລະ ອື່ນໆ;
4) ຕ້ອງກໍານົດໃຫ້ມີທາງອອກ ແລະ ທາງເຂົ້າ ຢ່າງຈະແຈ້ງ;
5) ບໍລິເວນໂຕະຈ່າຍເງິນ ຕ້ອງມີເຈວລ້າງມື ຫຼື ເຫຼົ້າສໍາລັບອະນາໄມຂ້າເຊື້ອ.

ສໍາລັບຄໍາແນະນໍາສະບັບນີ້ ແມ່ນນໍາໃຊ້ໄດ້ນັບແຕ່ວັນທີ ໃນໄລຍະແຕ່ ວັນທີ 18 ພຶດສະພາ ຫາວັນທີ 1 ມິຖຸນາ 2020, ຫາກສະພາບການແຜ່ລະບາດມີການປ່ຽນແປງ ຈະແຈ້ງຄໍາແນະນໍາໃໝ່ໃຫ້ສອດຄ່ອງຕາມສະພາບຕົວຈິງໃນແຕ່ລະໄລຍະ.

**ເຊັນແທນລັດຖະມົນຕີ**
**ຮອງລັດຖະມົນຕີ**
**ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ**
**ແລະ ແກ້ໄຂການລະບາດຂອງພະຍາດCOVID-19**

ສະຫວັນຄອນ ຣາຊມຸນຕີ